ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 272 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 16/ສພຊ, ລົງວັນທີ 25 ມິຖຸນາ 2019 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 23/ຄປຈ, ລົງວັນທີ 23 ກໍລະກົດ 2019.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 16 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25/06/19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 25 ມິຖຸນາ 2019.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຄ່າທຳນຽມສານ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 72 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2019

# ກົດໝາຍ
# ວ່າດ້ວຍຄ່າທຳນຽມສານ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເກັບ, ການຮັບ, ການຈ່າຍ, ການຄຸ້ມຄອງ ແລະ ນຳໃຊ້ ຄ່າທຳນຽມສານ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ເພື່ອສ້າງເງື່ອນໄຂໃຫ້ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເຄື່ອນໄຫວວຽກງານ ມີຄວາມສະດວກ ແນໃສ່ຮັບປະກັນໃຫ້ການດຳເນີນຄະດີ ມີຄວາມວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ປັບປຸງ) ຄ່າທຳນຽມສານ**

ຄ່າທຳນຽມສານ ແມ່ນ ຈຳນວນເງິນທີ່ຄູ່ຄວາມ ຫຼື ບຸກຄົນທີສາມ ຕ້ອງໄດ້ຈ່າຍ ຊຶ່ງປະກອບມີເງິນວາງສານ, ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ, ຄ່າເອກະສານ ແລະ ຄ່າຂໍອຸທອນ, ຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ຄ່າທຳນຽມສານທາງແພ່ງ** ໝາຍເຖິງ ຄ່າທຳນຽມໃນຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ, ປົກຄອງ ແລະ ອື່ນໆ;
2. **ມູນຄ່າທີ່ຕ້ອງຄິດໄລ່ຄ່າທຳນຽມຂອງຜູ້ເສຍຄະດີ** ໝາຍເຖິງ ມູນຄ່າການຮ້ອງຟ້ອງ ບວກກັບມູນຄ່າການຟ້ອງແຍ່ງ;
3. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;

4. **ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ** ໝາຍເຖິງ ຄຳຕັດສິນຂອງສານ ຊຶ່ງ ໂຈດ, ຈຳເລີຍ, ບຸກຄົນທີສາມບໍ່ໄດ້ຂໍອຸທອນ, ຂໍລຶບລ້າງ ຫຼື ໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ ຄຳພິພາກສາ ຂັ້ນລຶບລ້າງ ຂອງສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ;

5. **ພະນັກງານເກັບຄ່າທຳນຽມສານ** ໝາຍເຖິງ ຈ່າສານ, ພະນັກງານ-ລັດຖະກອນ ອົງການໄອຍະການປະຊາຊົນ, ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ປະຕິບັດໜ້າທີ່ ໃນການເກັບຄ່າທຳນຽມສານ;

6. **ອົງການການເງິນຂອງລັດ** ໝາຍເຖິງ ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ ແລະ ສະຖາບັນການເງິນອື່ນຂອງລັດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານຄ່າທຳນຽມສານ**

ລັດ ວາງນະໂຍບາຍ ກ່ຽວກັບການເກັບຄ່າທຳນຽມສານ ໃຫ້ເໝາະສົມກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ພ້ອມທັງຊຸກຍູ້ໃຫ້ຄູ່ຄວາມໃນຄະດີທີ່ກ່ຽວຂ້ອງ ປະຕິບັດພັນທະ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ ໃນການເສຍຄ່າທຳນຽມສານ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຄ່າທຳນຽມສານ**

ການເກັບ, ການຄຸ້ມຄອງ ແລະ ການນຳໃຊ້ ຄ່າທຳນຽມສານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ;
2. ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
3. ສະເໝີພາບ ແລະ ຍຸຕິທຳ;
4. ໂປ່ງໃສ ແລະ ສາມາດກວດສອບໄດ້;
5. ມີປະສິດທິພາບ.

**ມາດຕາ 6 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການເກັບຄ່າທຳນຽມສານຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການດຳເນີນຄະດີ ຢູ່ ສປປ ລາວ.

**ມາດຕາ 7 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄ່າທຳນຽມສານ ດ້ວຍການແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ໃຫ້ບຸກຄະລາກອນທີ່ກ່ຽວຂ້ອງ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ອົງປະກອບ ແລະ ວຽກງານຄ່າທຳນຽມສານ
### ໝວດທີ 1
### ອົງປະກອບຄ່າທຳນຽມສານ

**ມາດຕາ 8 (ປັບປຸງ) ອົງປະກອບຄ່າທຳນຽມສານ**

ຄ່າທຳນຽມສານ ປະກອບດ້ວຍ:

1. ເງິນວາງສານ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ;
3. ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ;
4. ຄ່າເອກະສານ ແລະ ຄ່າຂໍອຸທອນ;
5. ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 9 (ປັບປຸງ) ເງິນວາງສານ**

ເງິນວາງສານ ແມ່ນ ເງິນທີ່ຄູ່ຄວາມ ຫຼື ບຸກຄົນທີສາມ ໃນຄະດີທາງແພ່ງ ນຳມາວາງໄວ້ຢູ່ສານ ໃນເວລາຍື່ນຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ ຫຼື ຄຳຮ້ອງຂໍຮື້ຟື້ນ ເພື່ອໃຊ້ຈ່າຍໃນການດຳເນີນຄະດີ.

**ມາດຕາ 10 (ປັບປຸງ) ຄ່າໃຊ້ຈ່າຍໃນການດຳເນີນຄະດີ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີ ແມ່ນ ຄ່າໃຊ້ຈ່າຍ ໃນການເກັບກຳຂໍ້ມູນຫຼັກຖານ, ຊັນນະສູດສະຖານທີ່ເກີດເຫດ, ພິສູດຫຼັກຖານ, ຮັກສາຂອງກາງ ລວມທັງຄ່າເດີນທາງ, ຄ່າ ກິນ ຢູ່ ພັກເຊົາ ແລະ ອື່ນໆທີ່ກ່ຽວຂ້ອງກັບການດຳເນີນຄະດີ.

**ມາດຕາ 11 (ປັບປຸງ) ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ**

ພະຍານ ທີ່ຖືກຮຽກ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ, ຜູ້ແປພາສາ ທີ່ຖືກເຊີນເຂົ້າມາສານ ຫຼື ພະນັກງານກ່ຽວຂ້ອງ ໃນໄລຍະເວລາທີ່ລົງເຮັດວຽກນັ້ນ ຈະໄດ້ຮັບຄ່າໃຊ້ຈ່າຍໃນການເດີນທາງ, ກິນ ຢູ່ ພັກເຊົາ ຕາມລະບຽບການທີ່ກະຊວງການເງິນວາງອອກ. ໃນກໍລະນີທີ່ບຸກຄົນດັ່ງກ່າວ ໄດ້ຈ່າຍຄ່າເດີນທາງ, ຄ່າ ກິນ ຢູ່ ພັກເຊົາ ກ່ອນນັ້ນ ກໍຈະໄດ້ຮັບການທົດແທນຄືນ.

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ, ຜູ້ແປພາສາ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນກໍລະນີທີ່ສານໄດ້ແຕ່ງຕັ້ງ ສຳລັບໂທດປະຫານຊີວິດ, ຜູ້ສົ່ງເອກະສານ ແລະ ຜູ້ຮັກສາຂອງກາງ ຈະໄດ້ຮັບຄ່າແຮງງານ ໃນເວລາປະຕິບັດວຽກງານຕາມການມອບໝາຍຂອງສານຕາມລະບຽບການ. ສຳລັບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ນອກຈາກໄດ້ຮັບຄ່າແຮງງານແລ້ວ ຍັງຈະໄດ້ຮັບ ຄ່າເດີນທາງ, ກິນ ຢູ່ ພັກເຊົາ ຕາມລະບຽບການທີ່ກະຊວງການເງິນວາງອອກ.

ສຳລັບ ພະນັກງານ-ລັດຖະກອນ, ພະນັກງານ ຈາກພາກສ່ວນອື່ນ ຫຼື ກຳມະກອນ ທີ່ມີເງິນເດືອນ ຊຶ່ງຖືກເຊີນເຂົ້າມາສານໃນຖານະເປັນພະຍານນັ້ນ ໃຫ້ຮັກສາເງິນເດືອນເດີມຂອງຜູ້ກ່ຽວໄວ້; ສຳລັບພະຍານ

ທີ່ບໍ່ມີເງິນເດືອນ ຊຶ່ງຖືກເຊີນເຂົ້າມາສານ ໂດຍປະວຽກງານປະຈຳວັນນັ້ນ ຜູ້ກ່ຽວກໍຈະໄດ້ຮັບຄ່າຕອບແທນຄືນຕາມລະບຽບການ.

**ມາດຕາ 12 ຄ່າເອກະສານ ແລະ ຄ່າຂໍອຸທອນ**

ຄ່າເອກະສານ ປະກອບດ້ວຍ:

1. ເສື້ອປົກສຳນວນຄະດີ;
2. ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສີນ ແລະ ຄຳພິພາກສາ ຂອງສານ;
3. ສຳເນົາເອກະສານ.

ຄ່າຂໍອຸທອນ ປະກອບດ້ວຍ:

1. ຂໍອຸທອນຄຳຕັດສີນ;
2. ຂໍລຶບລ້າງຄຳພິພາກສາ;
3. ຂໍຮື້ຟື້ນ.

**ມາດຕາ 13 (ປັບປຸງ) ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ**

ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແມ່ນ ພາກສ່ວນໜຶ່ງຂອງຄ່າທຳນຽມສານ ຊຶ່ງຄູ່ຄວາມຜູ້ເສຍຄະດີ ຕ້ອງຈ່າຍຕາມຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ອນຈະນຳໄປຈັດຕັ້ງປະຕິບັດ.

ພະນັກງານປະຕິບັດຄຳຕັດສີນຂອງສານ ເປັນຜູ້ເກັບຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, ຈຳນວນເງິນທີ່ເກັບໄດ້ນັ້ນ ຕ້ອງມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 14 (ໃໝ່) ຄ່າທຳນຽມສານ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ**

ຄ່າທຳນຽມສານໃນຄະດີອາຍາ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ ໃນກໍລະນີທີ່ສານຕັດສີນລົງໂທດຈຳເລີຍນັ້ນ ແມ່ນ ຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25, ມາດຕາ 26, ມາດຕາ 27 ແລະ ມາດຕາ 30 ຂອງກົດໝາຍສະບັບນີ້. ນອກຈາກນີ້ຍັງມີຄ່າທຳນຽມສານໃນຄະດີທາງແພ່ງ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36, ມາດຕາ 37 ແລະ ມາດຕາ 40 ຂອງກົດໝາຍສະບັບນີ້.

**ມາດຕາ 15 (ໃໝ່) ຄ່າທຳນຽມສານທີ່ນຳໃຊ້ເຂົ້າໃນການດຳເນີນຄະດີ**

ຄ່າທຳນຽມສານທີ່ນຳໃຊ້ເຂົ້າໃນການດຳເນີນຄະດີ ແມ່ນ ຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25, ມາດຕາ 26, ມາດຕາ 27, ມາດຕາ 33, ມາດຕາ 34 ແລະ ມາດຕາ 35 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ວຽກງານຄ່າທຳນຽມສານ

**ມາດຕາ 16 (ໃໝ່) ວຽກງານຄ່າທຳນຽມສານ**

ວຽກງານຄ່າທຳນຽມສານ ປະກອບດ້ວຍ:

1. ການຈ່າຍຄ່າທຳນຽມສານ;

2. ພັນທະ ແລະ ຄວາມຮັບຜິດຊອບຕໍ່ຄ່າທຳນຽມສານ;
3. ການເກັບຄ່າທຳນຽມສານ;
4. ການມອບ ແລະ ການຮັບ ຄ່າທຳນຽມສານ;
5. ການນຳໃຊ້ ຄ່າທຳນຽມສານ;
6. ການສະຫຼຸບ ຄ່າທຳນຽມສານ.

**ມາດຕາ 17 (ປັບປຸງ) ການຈ່າຍຄ່າທຳນຽມສານ**

ການຈ່າຍຄ່າທຳນຽມສານ ໃຫ້ປະຕິບັດ ດັ່ງນີ້:

1. ຄ່າທຳນຽມສານ ໃຫ້ຈ່າຍເປັນເງິນກີບ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າເອກະສານ ແລະ ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ ໃຫ້ຈ່າຍໃນເວລາດຳເນີນຄະດີຢູ່ສານ;
3. ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຈ່າຍໃນເວລາຈັດຕັ້ງປະຕິບັດຄຳຕັດສີນຂອງສານ ກ່ອນນຳເອົາຄຳຕັດສີນດັ່ງກ່າວ ໄປຈັດຕັ້ງປະຕິບັດ;
4. ການຮັບ ແລະ ການຈ່າຍ ຄ່າທຳນຽມສານ ໃຫ້ເຮັດເປັນລາຍລັກອັກສອນ.

**ມາດຕາ 18 (ປັບປຸງ) ພັນທະ ແລະ ຄວາມຮັບຜິດຊອບ ຕໍ່ຄ່າທຳນຽມສານ**

ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ທີ່ກ່ຽວຂ້ອງໃນຄະດີທາງແພ່ງ ມີພັນທະ ແລະ ຄວາມຮັບຜິດຊອບຈ່າຍຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ ເພື່ອອຳນວຍຄວາມສະດວກໃຫ້ສານປະຊາຊົນ, ພະນັກງານປະຕິບັດຄຳຕັດສີນຂອງສານ ດຳເນີນຄະດີ ແລະ ຈັດຕັ້ງປະຕິບັດຄຳຕັດສີນຂອງສານ ມີປະສິດທິຜົນ.

ສຳລັບຄ່າທຳນຽມສານທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ໃຫ້ລັດ ເປັນຜູ້ຮັບຜິດຊອບຈ່າຍກ່ອນ.

ພະນັກງານທີ່ເກັບຄ່າທຳນຽມສານ ປະຕິບັດໜ້າທີ່, ຄວາມຮັບຜິດຊອບ ແລະ ພັນທະຂອງຕົນຕາມກົດໝາຍ.

**ມາດຕາ 19 (ປັບປຸງ) ການເກັບຄ່າທຳນຽມສານ**

ຄ່າທຳນຽມສານ ໃຫ້ເກັບນຳ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຄ່າທຳນຽມສານ ທີ່ເປັນຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີ ແລະ ຄ່າເອກະສານ ໃຫ້ເກັບນຳຜູ້ຮ້ອງຂໍໃຫ້ສານປະກອບຫຼັກຖານນັ້ນກ່ອນ.

ໃນກໍລະນີ ທີ່ສານຫາກເຫັນວ່າມີຄວາມຈຳເປັນຕ້ອງລົງເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານ ຫຼື ບຸກຄົນໃດໜຶ່ງທີ່ກ່ຽວຂ້ອງໃນຄະດີ ເຂົ້າມາໃຫ້ການຕໍ່ສານ ໃຫ້ເກັບນຳໂຈດ.

ໃນກໍລະນີ ທີ່ມີການຂໍອຸທອນ ຫຼື ການຂໍລົບລ້າງ ໃຫ້ເກັບຄ່າຂໍອຸທອນ ຫຼື ຄ່າຂໍລົບລ້າງ ນຳຜູ້ຮ້ອງຂໍ ລວມທັງຄ່າໃຊ້ຈ່າຍສຳລັບການດຳເນີນຄະດີຢູ່ສານຂັ້ນອຸທອນ ຫຼື ຂັ້ນລົບລ້າງ.

ໃນກໍລະນີ ທີ່ສານຫາກເຫັນວ່າມີຄວາມຈຳເປັນຕ້ອງລົງເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານ ຫຼື ບຸກຄົນໃດໜຶ່ງ ທີ່ກ່ຽວຂ້ອງໃນຄະດີ ເຂົ້າມາໃຫ້ການຕໍ່ສານ ໃຫ້ເກັບນຳ ຜູ້ຮ້ອງຂໍອຸທອນ ຫຼື ຜູ້ຮ້ອງຂໍລົບລ້າງ.

**ມາດຕາ 20 (ປັບປຸງ) ການມອບ ແລະ ການຮັບ ຄ່າທຳນຽມສານ**

ການມອບ ແລະ ການຮັບ ຄ່າທຳນຽມສານ ໃຫ້ຈ່າສານ ເຮັດໜັງສືມອບຮັບເງິນ ຢ່າງຖືກຕ້ອງ ຕາມຈຳນວນເງິນທີ່ໄດ້ມອບຮັບຕົວຈິງ ໂດຍມີລາຍເຊັນ ຫຼື ແປະໂປ້ມື, ຊື່ ແລະ ນາມສະກຸນ ຂອງຜູ້ມອບ ແລະ ຜູ້ຮັບ.

ໃບຮັບເງິນ ຕ້ອງເຮັດເປັນ ສາມສະບັບ ໃນນີ້ ໜຶ່ງສະບັບ ໃຫ້ຜູ້ມອບເງິນ, ໜຶ່ງສະບັບ ເອົາໄວ້ໃນສຳນວນຄະດີ ແລະ ອີກໜຶ່ງສະບັບ ສຳເນົາໄວ້.

**ມາດຕາ 21 (ປັບປຸງ) ການນຳໃຊ້ຄ່າທຳນຽມສານ**

ການນຳໃຊ້ຄ່າທຳນຽມສານເຂົ້າໃນການດຳເນີນຄະດີ ຕ້ອງບົນພື້ນຖານ ລະບຽບການ ແລະ ມີການຕົກລົງ ຂອງຄະນະສານທີ່ກ່ຽວຂ້ອງ.

ການນຳໃຊ້ຄ່າທຳນຽມສານ ຕ້ອງມີ ແຜນການ, ເປົ້າໝາຍ, ການມອບ, ການຮັບ ເປັນລາຍລັກອັກສອນຢ່າງຖືກຕ້ອງ.

**ມາດຕາ 22 (ປັບປຸງ) ການສະຫຼຸບຄ່າທຳນຽມສານ**

ຄ່າທຳນຽມສານ ທີ່ໃຊ້ຈ່າຍເຂົ້າໃນການດຳເນີນຄະດີ ຕ້ອງສະຫຼຸບຢ່າງລະອຽດ, ຈະແຈ້ງ, ເປັນລາຍລັກອັກສອນ ໃຫ້ສຳເລັດກ່ອນການນຳເອົາຄະດີຂຶ້ນໄຕ່ສວນໃນທີ່ປະຊຸມສານ. ບົດສະຫຼຸບການໃຊ້ຈ່າຍຄ່າທຳນຽມສານ ຕ້ອງເກັບໄວ້ໃນສຳນວນຄະດີ ເພື່ອໃຫ້ສານພິຈາລະນາວິນິດໄສ ລົງໃນຄຳຕັດສິນ ຫຼື ຄຳພິພາກສາ.

## ພາກທີ III
## ຄ່າທຳນຽມສານທາງອາຍາ
### ໝວດທີ 1
### ຄ່າທຳນຽມສານ ແລະ ອົງປະກອບຄ່າທຳນຽມສານ ທາງອາຍາ

**ມາດຕາ 23 ຄ່າທຳນຽມສານທາງອາຍາ**

ຄ່າທຳນຽມສານທາງອາຍາ ແມ່ນ ຄ່າໃຊ້ຈ່າຍຂອງ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການປະຊາຊົນ ແລະ ສານປະຊາຊົນ ເຂົ້າໃນການດຳເນີນຄະດີອາຍາ ເຊັ່ນ ການລົງຊັນນະສູດສະຖານທີ່ເກີດເຫດ, ການລົງເກັບກຳຂໍ້ມູນ, ການພິສູດຫຼັກຖານ, ການຊອກຫາຕົວຜູ້ຖືກຫາ ຫຼື ຈຳເລີຍ ລວມທັງການໃຊ້ຈ່າຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10, ມາດຕາ 11, ມາດຕາ 12, ມາດຕາ 30 ແລະ ມາດຕາ 36 ຂອງກົດໝາຍສະບັບນີ້.

**ມາດຕາ 24 ອົງປະກອບຄ່າທຳນຽມສານທາງອາຍາ**

ອົງປະກອບຄ່າທຳນຽມສານທາງອາຍາ ປະກອບດ້ວຍ:

1. ຄ່າໃຊ້ຈ່າຍໃນການດຳເນີນຄະດີອາຍາ;

2. ຄ່າໃຊ້ຈ່າຍສໍາລັບຜູ້ຖືກເຊີນເຂົ້າຮ່ວມໃນການດໍາເນີນຄະດີອາຍາ;
3. ຄ່າທໍານຽມເອກະສານ ແລະ ຄ່າຂໍອຸທອນ ທາງອາຍາ.

**ມາດຕາ 25 (ປັບປຸງ) ຄ່າໃຊ້ຈ່າຍໃນການດໍາເນີນຄະດີອາຍາ**

ຄ່າໃຊ້ຈ່າຍໃນການດໍາເນີນຄະດີອາຍາ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້.

ສໍາລັບຄ່າໃຊ້ຈ່າຍໃນການດໍາເນີນຄະດີຂອງອົງການດໍາເນີນຄະດີອາຍາ ຕ້ອງມີບົດສະຫຼຸບການໃຊ້ຈ່າຍເງິນ ແຕ່ລະເປົ້າໝາຍຢ່າງລະອຽດ ເພື່ອເປັນບ່ອນອີງໃຫ້ສານພິຈາລະນາ ໃນກໍລະນີທີ່ຈໍາເລີຍຖືກຕັດສິນລົງໂທດ.

**ມາດຕາ 26 ຄ່າໃຊ້ຈ່າຍສໍາລັບຜູ້ຖືກເຊີນເຂົ້າຮ່ວມໃນການດໍາເນີນຄະດີອາຍາ**

ຄ່າໃຊ້ຈ່າຍສໍາລັບຜູ້ຖືກເຊີນເຂົ້າຮ່ວມໃນການດໍາເນີນຄະດີອາຍາ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 27 ຄ່າທໍານຽມເອກະສານ ແລະ ຄ່າຂໍອຸທອນ ທາງອາຍາ**

ຄ່າທໍານຽມເອກະສານ ແລະ ຄ່າຂໍອຸທອນ ທາງອາຍາ ໃຫ້ປະຕິບັດດັ່ງດຽວກັນກັບ ຄ່າທໍານຽມເອກະສານ ແລະ ຄ່າຂໍອຸທອນ ທາງແພ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 36 ແລະ ມາດຕາ 40 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ຄວາມຮັບຜິດຊອບຕໍ່ຄ່າທໍານຽມສານທາງອາຍາ

**ມາດຕາ 28 ຄວາມຮັບຜິດຊອບຕໍ່ຄ່າທໍານຽມສານທາງອາຍາ**

ຄ່າໃຊ້ຈ່າຍໃນການດໍາເນີນຄະດີອາຍາ, ຄ່າໃຊ້ຈ່າຍສໍາລັບ ຜູ້ຖືກເຊີນເຂົ້າຮ່ວມໃນການດໍາເນີນຄະດີອາຍາ ແລະ ຄ່າເອກະສານ ໃຫ້ລັດເປັນຜູ້ຈ່າຍກ່ອນ. ຖ້າສານຫາກຕັດສິນໃຫ້ຈໍາເລີຍມີຄວາມຜິດທາງອາຍາ ໃຫ້ຈໍາເລີຍເປັນຜູ້ໃຊ້ແທນຄ່າທໍານຽມສານທີ່ລັດໄດ້ຈ່າຍໄປກ່ອນແລ້ວນັ້ນ ຄືນໃຫ້ແກ່ລັດ.ໃນກໍລະນີ ທີ່ມີຜູ້ກະທໍາຜິດຫຼາຍຄົນ ກໍໃຫ້ແບ່ງກັນຈ່າຍຕາມຄວາມຮັບຜິດຊອບຂອງແຕ່ລະຄົນ. ໃນກໍລະນີ ທີ່ເດັກເປັນຜູ້ກະທໍາຜິດໃຫ້ ພໍ່, ແມ່ ຫຼື ຜູ້ປົກຄອງ ເປັນຜູ້ຮັບຜິດຊອບ.

ໃນກໍລະນີທີ່ມີການຕັດສິນໃຫ້ຈໍາເລີຍພົ້ນຂໍ້ກ່າວຫາ ຫຼື ຕັດສິນລົງໂທດ, ຜູ້ກະທໍາຜິດ ທີ່ຢູ່ໃນສະພາບບໍ່ສາມາດຈະຈ່າຍຄ່າທໍານຽມສານໄດ້ນັ້ນ ໃຫ້ລັດເປັນຜູ້ຮັບຜິດຊອບ.

ໃນກໍລະນີ ທີ່ມີການຖອນຄໍາຮ້ອງຟ້ອງ ເນື່ອງຈາກມີການຕົກລົງກັນລະຫວ່າງ ຜູ້ຖືກເສຍຫາຍກັບຜູ້ຖືກຫາ ຫຼື ຈໍາເລີຍໃນຄະດີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງປະມວນກົດໝາຍອາຍາ ໃຫ້ຜູ້ຖືກເສຍຫາຍ ແລະ ຜູ້ຖືກຫາ ເປັນຜູ້ເສຍຄ່າໃຊ້ຈ່າຍໃນການດໍາເນີນຄະດີນັ້ນ.

**ມາດຕາ 29 ການຍົກເວັ້ນຄ່າທຳນຽມສານທາງອາຍາ**

ການດຳເນີນຄະດີອາຍາ ທີ່ຍົກເວັ້ນ ຄ່າທຳນຽມສານ, ຄ່າຂໍອຸທອນ, ຄ່າຂໍລຶບລ້າງ ແລະ ຄ່າຂໍຮື້ຟື້ນ ມີດັ່ງນີ້:

1. ສານຕັດສິນ ໃຫ້ຈຳເລີຍພົ້ນຂໍ້ກ່າວຫາ;
2. ສານຕັດສິນ ລົງໂທດຜູ້ກະທຳຜິດ ຊຶ່ງຕົກຢູ່ໃນສະພາບບໍ່ສາມາດຈ່າຍຄ່າທຳນຽມສານໄດ້;
3. ສານຕັດສິນ ລົງໂທດປະຫານຊີວິດຈຳເລີຍ.

**ມາດຕາ 30 ຄ່າຂໍອຸທອນຄະດີອາຍາ**

ຄ່າຂໍອຸທອນຄຳຕັດສິນ, ຄ່າຂໍລຶບລ້າງ ແລະ ຄ່າຂໍຮື້ຟື້ນ ຄະດີອາຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 40 ວັກທີໜຶ່ງ ຂອງກົດໝາຍສະບັບນີ້, ຍົກເວັ້ນການສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ.

## ພາກທີ IV
## ຄ່າທຳນຽມສານທາງແພ່ງ
### ໝວດທີ 1
### ຄ່າທຳນຽມສານ ແລະ ອົງປະກອບຄ່າທຳນຽມສານ ທາງແພ່ງ

**ມາດຕາ 31 (ປັບປຸງ) ຄ່າທຳນຽມສານທາງແພ່ງ**

ຄ່າທຳນຽມສານທາງແພ່ງ ແມ່ນ ຄ່າໃຊ້ຈ່າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ ຊຶ່ງຄູ່ຄວາມ ຫຼື ບຸກຄົນທີສາມ ເປັນຜູ້ຮັບຜິດຊອບ.

**ມາດຕາ 32 (ປັບປຸງ) ອົງປະກອບຄ່າທຳນຽມສານທາງແພ່ງ**

ອົງປະກອບຄ່າທຳນຽມສານທາງແພ່ງ ປະກອບດ້ວຍ:

1. ເງິນວາງສານ;
2. ຄ່າໃຊ້ຈ່າຍໃນການດຳເນີນຄະດີທາງແພ່ງ;
3. ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີທາງແພ່ງ;
4. ຄ່າທຳນຽມເອກະສານ ແລະ ຄ່າຂໍອຸທອນ ທາງແພ່ງ;
5. ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 33 (ໃໝ່) ເງິນວາງສານ**

ເງິນວາງສານ ແມ່ນ ເງິນທີ່ຄູ່ຄວາມ ຫຼື ບຸກຄົນທີສາມ ໃນຄະດີທາງແພ່ງ ນຳມາວາງໄວ້ຢູ່ສານ ເພື່ອເປັນຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9, ມາດຕາ 38 ແລະ ມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 34 ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ**

ຄ່າໃຊ້ຈ່າຍໃນການດຳເນີນຄະດີແພ່ງ ແມ່ນ ຄ່າໃຊ້ຈ່າຍໃນການດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍສະບັບນີ້.

ຄູ່ຄວາມ ຫຼື ບຸກຄົນທີສາມ ທີ່ຮ້ອງຂໍໃຫ້ທຳການເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານເຂົ້າມາໃຫ້ການ ເພື່ອຊອກຫາຂໍ້ເທັດຈິງໃນຄະດີໃຫ້ແຈ້ງຂາວນັ້ນ ຜູ້ຮ້ອງຂໍຕ້ອງນຳເອົາເງິນມາມອບໃຫ້ສານ ເພື່ອເປັນຄ່າໃຊ້ຈ່າຍ.

ໃນກໍລະນີທີ່ເຫັນວ່າ ມີຄວາມຈຳເປັນໃນການລົງເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາພະຍານ ຫຼື ບຸກຄົນໃດໜຶ່ງ ທີ່ກ່ຽວຂ້ອງໃນຄະດີມາໃຫ້ການນັ້ນ ໃຫ້ໂຈດເປັນຜູ້ຈ່າຍກ່ອນ.

**ມາດຕາ 35 ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີແພ່ງ**

ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມໃນການດຳເນີນຄະດີແພ່ງ ແມ່ນ ຄ່າໃຊ້ຈ່າຍໃນການດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 36 ຄ່າທຳນຽມເອກະສານ ແລະ ຄ່າຂໍອຸທອນ ທາງແພ່ງ**

ຄ່າທຳນຽມເອກະສານ ແລະ ຄ່າຂໍອຸທອນ ທາງແພ່ງ ໃຫ້ປະຕິບັດ ດັ່ງນີ້:

1. ເສື້ອປົກສຳນວນຄະດີ ໃຫ້ເກັບຊຸດລະ 35.000ກີບ;
2. ຢັ້ງຢືນສຳເນົາເອກະສານຕ່າງໆ ໃນສຳນວນຄະດີ ໃຫ້ເກັບຄັ້ງລະ 5.000 ກີບ;
3. ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ເກັບຊຸດລະ 20.000 ກີບ.

**ມາດຕາ 37 (ປັບປຸງ) ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ**

ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ເສຍຄ່າທຳນຽມ ສອງສ່ວນຮ້ອຍ ຂອງມູນຄ່າການຮ້ອງຟ້ອງ;
2. ໃຫ້ເສຍ 100.000 ກີບ ກ່ຽວກັບຄະດີສາຍຜົວ ເມຍ;
3. ໃຫ້ເສຍ 80.000 ກີບ ກ່ຽວກັບການຂໍຢ່າຮ້າງກັບບຸກຄົນ ທີ່ຖືກຮັບຮູ້ວ່າເປັນຜູ້ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າປີ ຂຶ້ນໄປ;
4. ໃຫ້ເສຍ 100.000 ກີບ ກ່ຽວກັບການຮ້ອງຟ້ອງ ເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາ ແລະ ການຮ້ອງຟ້ອງອື່ນ ທີ່ບໍ່ສາມາດຕີມູນຄ່າໄດ້.

ໃນກໍລະນີຫາກມີການໄກ່ເກ່ຍ, ຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ ໃຫ້ຄູ່ຄວາມຕົກລົງກັນໃນການຮັບຜິດຊອບຈ່າຍ.

## ໝວດທີ 2
## ການເກັບເງິນວາງສານ ແລະ ຄ່າທຳນຽມສານ ຂອງສານແຕ່ລະຂັ້ນ

**ມາດຕາ 38 (ປັບປຸງ) ການເກັບ ແລະ ການນຳໃຊ້ ເງິນວາງສານ**

ສານຂັ້ນຕົ້ນ ແລະ ຂັ້ນອຸທອນ ໃຫ້ເກັບເງິນວາງສານ ແຕ່ລະຄັ້ງບໍ່ໃຫ້ເກີນ 300.000 ກີບ.

ສານຂັ້ນລຶບລ້າງ ແລະ ຂັ້ນຮື້ຟື້ນ ໃຫ້ເກັບເງິນວາງສານ ແຕ່ລະຄັ້ງບໍ່ໃຫ້ເກີນ 200.000 ກີບ.

ເງິນວາງສານຈະຖືກນຳໃຊ້ ໃນກໍລະນີ ດັ່ງນີ້:

1. ການສົ່ງໝາຍຮຽກ;
2. ການສົ່ງເອກະສານ ແລະ ສຳນວນຄະດີ;
3. ການໃຊ້ຈ່າຍອື່ນ ທີ່ເຫັນວ່າມີຄວາມຈຳເປັນ ໃນການດຳເນີນຄະດີແພ່ງ.

ການໃຊ້ຈ່າຍເງິນວາງສານ ຕ້ອງມີບັນຊີຕິດຕາມ ແລະ ປິດສະຫຼຸບ ກ່ອນນຳເອົາຄະດີຂຶ້ນໄຕ່ສວນໃນທີ່ປະຊຸມສານ, ໃນກໍລະນີ ເງິນວາງສານນັ້ນຫາກເຫຼືອຈາກການໃຊ້ຈ່າຍແລ້ວ ຕ້ອງສົ່ງຄືນໃຫ້ຜູ້ກ່ຽວ.

**ມາດຕາ 39 (ໃໝ່) ການເກັບເງິນວາງສານ ແລະ ຄ່າທຳນຽມສານ ຂອງສານແຕ່ລະຂັ້ນ**

ສານຂັ້ນຕົ້ນ ເກັບເງິນວາງສານ ແລະ ຄ່າທຳນຽມສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີ ຢູ່ສານຂັ້ນຕົ້ນ ແລະ ຄ່າຂໍອຸທອນ.

ສານຂັ້ນອຸທອນ ເກັບເງິນວາງສານ ແລະ ຄ່າທຳນຽມສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີ ຢູ່ສານຂັ້ນອຸທອນ ແລະ ຄ່າຂໍລຶບລ້າງ.

ສານຂັ້ນລຶບລ້າງ ແລະ ຂັ້ນຮື້ຟື້ນ ເກັບເງິນວາງສານ ແລະ ຄ່າທຳນຽມສານ ທີ່ກ່ຽວຂ້ອງກັບການດຳເນີນຄະດີ ຢູ່ສານຂັ້ນລຶບລ້າງ ແລະ ຂັ້ນຮື້ຟື້ນ ເມື່ອມີຄວາມຈຳເປັນ.

ການເກັບຄ່າທຳນຽມສານ ຕ້ອງເຮັດໃບຮັບເງິນ ຊຶ່ງບົ່ງບອກເຖິງຈຳນວນເງິນ ແລະ ເປົ້າໝາຍການນຳໃຊ້ ໂດຍມີການເຊັນຢັ້ງຢືນຈາກຜູ້ມອບ ແລະ ຜູ້ຮັບ.

## ໝວດທີ 3
## ຄວາມຮັບຜິດຊອບຕໍ່ຄ່າທຳນຽມສານທາງແພ່ງ

**ມາດຕາ 40 (ປັບປຸງ) ຄ່າຂໍອຸທອນຄະດີແພ່ງ**

ການຂໍອຸທອນຄຳຕັດສິນ, ການຂໍລຶບລ້າງ ແລະ ການຂໍຮື້ຟື້ນຄະດີແພ່ງ ແລະ ການຮ້ອງຟ້ອງເພື່ອຂໍປ່ຽນແປງ ຫຼື ຍົກເລີກສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂໍ້ 4 ຂອງກົດໝາຍສະບັບນີ້ ໃຫ້ປະຕິບັດ ດັ່ງນີ້:

1. ຄ່າຂໍອຸທອນຄຳຕັດສິນ ໃຫ້ເກັບ 50.000 ກີບ;
2. ຄ່າຂໍລຶບລ້າງ ໃຫ້ເກັບ 80.000 ກີບ;
3. ຄ່າຂໍຮື້ຟື້ນຄະດີ ໃຫ້ເກັບ 100.000 ກີບ.

ສຳລັບ ການຂໍອຸທອນຄຳຕັດສິນ, ການຂໍລຶບລ້າງ ແລະ ການຂໍຮື້ຟື້ນ ຄະດີກ່ຽວກັບຄະດີສາຍຜົວ ເມຍ, ການຮ້ອງຟ້ອງ ເພື່ອຂໍຢ່າຮ້າງກັບບຸກຄົນທີ່ຖືກຮັບຮູ້ວ່າເປັນຜູ້ຫາຍສາບສູນ ຫຼື ບຸກຄົນທີ່ບໍ່ມີຄວາມສາ

ມາດທາງດ້ານການປະພຶດ ຫຼື ບຸກຄົນທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ ຫ້າປີ ຂຶ້ນໄປຕາມທີ່ໄດ້ກໍານົດໄວ້ໃນມາດຕາ 37 ຂໍ້ 2 ແລະ ຂໍ້ 3 ໃຫ້ປະຕິບັດ ດັ່ງນີ້:

1. ຄ່າຂໍອຸທອນຄໍາຕັດສິນ ໃຫ້ເກັບ 20.000 ກີບ;
2. ຄ່າຂໍລົບລ້າງ ໃຫ້ເກັບ 30.000 ກີບ;
3. ຄ່າຂໍຮື້ຟື້ນຄະດີ ໃຫ້ເກັບ 50.000 ກີບ.

**ມາດຕາ 41 (ປັບປຸງ) ການຍົກເວັ້ນ ຄ່າທໍານຽມຂອງຜູ້ເສຍຄະດີຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຄ່າຂໍອຸທອນ ໃນຄະດີແພ່ງ**

ການຮ້ອງຟ້ອງທາງແພ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການຍົກເວັ້ນການຈ່າຍຄ່າທໍານຽມຂອງຜູ້ເສຍຄະດີ ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຄ່າຂໍອຸທອນສະເພາະແຕ່ຜູ້ຮ້ອງຟ້ອງ, ອົງການຈັດຕັ້ງລັດທີ່ຖືກຮ້ອງຟ້ອງໃນຄະດີປົກຄອງ ທີ່ເສຍຄະດີເທົ່ານັ້ນ. ສໍາລັບຜູ້ຖືກຮ້ອງຟ້ອງທີ່ເສຍຄະດີ ຈະບໍ່ໄດ້ຮັບການຍົກເວັ້ນ ແລະ ຕ້ອງໄດ້ປະຕິບັດຕາມມາດຕາ 37 ຂໍ້ 1 ແລະ ມາດຕາ 40 ວັກທີໜຶ່ງ ຂອງກົດໝາຍສະບັບນີ້ ໃນກໍລະນີທີ່ຜູ້ກ່ຽວຫາກຮ້ອງຂໍອຸທອນຄະດີນັ້ນ.

**ມາດຕາ 42 ການຍົກເວັ້ນຄ່າທໍານຽມສານທາງແພ່ງ**

ການຮ້ອງຟ້ອງ ທີ່ຍົກເວັ້ນຄ່າທໍານຽມສານທາງແພ່ງ ຄື ຄ່າທໍານຽມຂອງຜູ້ເສຍຄະດີ ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຄ່າຂໍອຸທອນໃນຄະດີແພ່ງ ມີ ດັ່ງນີ້:

1. ການຮ້ອງຟ້ອງເອົາຄ່າແຮງງານ ຫຼື ການຮ້ອງຂໍອື່ນ ທີ່ເນື່ອງມາຈາກສາຍພົວພັນແຮງງານ;
2. ການຮ້ອງຟ້ອງເອົາຄ່າລ້ຽງດູ;
3. ການຮ້ອງຟ້ອງເອົາການໃຊ້ແທນຄ່າເສຍຫາຍ ທີ່ເນື່ອງມາຈາກການເສຍອົງຄະ ຫຼື ສຸຂະພາບ ຫຼື ການເສຍຊີວິດ;
4. ການຮ້ອງຟ້ອງເອົາການໃຊ້ແທນຄ່າເສຍຫາຍ ທີ່ເນື່ອງມາຈາກການກະທໍາຜິດທາງອາຍາ;
5. ການຮ້ອງຟ້ອງເອົາເງິນອຸດໜູນ ຫຼື ເງິນບໍານານ ທີ່ຈ່າຍບໍ່ຖືກຕ້ອງນັ້ນຄືນ;
6. ການຮ້ອງຟ້ອງຂອງອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງບຸກຄົນອື່ນ;
7. ການຮ້ອງຟ້ອງຂອງອົງການການເງິນຂອງລັດ;
8. ການຮ້ອງຟ້ອງຂອງອົງການບໍລິຫານລັດ, ພະນັກງານ ຫຼື ບຸກຄົນ ທີ່ເນື່ອງມາຈາກສາຍພົວພັນທາງດ້ານບໍລິຫານ.

ການຍົກເວັ້ນດັ່ງກ່າວ ໃຫ້ປະຕິບັດຕໍ່ຜູ້ຮ້ອງຟ້ອງທີ່ເສຍຄະດີ ຫຼື ອົງການລັດທີ່ຖືກຮ້ອງຟ້ອງໃນຄະດີປົກຄອງ ທີ່ເສຍຄະດີເທົ່ານັ້ນ.

ສໍາລັບຜູ້ຖືກຮ້ອງຟ້ອງທີ່ເສຍຄະດີນັ້ນ ຈະບໍ່ໄດ້ຮັບການຍົກເວັ້ນ.

**ມາດຕາ 43 (ປັບປຸງ) ພັນທະໃນການໃຊ້ແທນຄ່າທໍານຽມສານທາງແພ່ງ**

ຝ່າຍທີ່ເສຍຄະດີຕ້ອງ ໃຊ້ແທນຄ່າໃຊ້ຈ່າຍຕ່າງໆ ໃນການດໍາເນີນຄະດີ ໃຫ້ແກ່ຝ່າຍທີ່ຊະນະຄະດີ ແລະ ຈ່າຍຄ່າທໍານຽມຂອງຜູ້ເສຍຄະດີ ຕາມຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

ຖ້າການຮ້ອງຟ້ອງ ຫາກຖືກສານຕັດສິນໃຫ້ໂຈດໄດ້ສ່ວນໃດສ່ວນໜຶ່ງ, ຈຳເລີຍຕ້ອງຈ່າຍຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມສ່ວນທີ່ສານໄດ້ຕັດສິນໃຫ້ໂຈດນັ້ນ. ສ່ວນຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ເຫຼືອນັ້ນ ໃຫ້ໂຈດເປັນຜູ້ຈ່າຍ.

ຖ້າການຟ້ອງແຍ້ງ ຫາກຖືກສານຕັດສິນໃຫ້ຈຳເລີຍໄດ້ສ່ວນໃດສ່ວນໜຶ່ງ ຕາມການຟ້ອງແຍ້ງ, ໂຈດຕ້ອງຈ່າຍຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຕາມສ່ວນທີ່ສານຕັດສິນໃຫ້ຈຳເລີຍນັ້ນ. ສ່ວນຄ່າທຳນຽມຂອງຜູ້ເສຍຄະດີຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ທີ່ເຫຼືອນັ້ນ ໃຫ້ຈຳເລີຍເປັນຜູ້ຈ່າຍ.

ໃນກໍລະນີ ທີ່ອົງການໄອຍະການປະຊາຊົນ, ອົງການບໍລິຫານລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ເປັນຜູ້ຮ້ອງຟ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນອື່ນ ເມື່ອສານຫາກຕັດສິນຍົກເລີກຄຳຮ້ອງຟ້ອງທັງໝົດ, ຈຳເລີຍຈະໄດ້ຮັບການໃຊ້ແທນຄືນລາຍຈ່າຍ ຊຶ່ງຜູ້ກ່ຽວໄດ້ຈ່າຍໃນການດຳເນີນຄະດີ ໂດຍຄິດໄລ່ເອົາຈາກພາກສ່ວນທີ່ຮ້ອງຟ້ອງນັ້ນ.

### ມາດຕາ 44 (ປັບປຸງ) ຜູ້ຮັບຜິດຊອບເກັບຄ່າທຳນຽມສານທາງແພ່ງ

ພະນັກງານຂອງສານແຕ່ລະຂັ້ນ ເປັນຜູ້ຮັບຜິດຊອບເກັບຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9, ມາດຕາ 10, ມາດຕາ 11, ມາດຕາ 12 ແລະ ມາດຕາ 13 ຂອງກົດໝາຍສະບັບນີ້.

ພະນັກງານປະຕິບັດຄຳຕັດສິນຂອງສານ ເປັນຜູ້ຮັບຜິດຊອບເກັບຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຄ່າໃຊ້ຈ່າຍອື່ນ ຕາມຄຳຕົກລົງຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

ພາຍຫຼັງ ເກັບຄ່າທຳນຽມສານທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດສຳເລັດແລ້ວ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ ຊຶ່ງຕ້ອງມີໃບເກັບເງິນອາກອນສາມສະບັບ.ໃນນີ້ ໜຶ່ງສະບັບ ມອບໃຫ້ຜູ້ມອບເງິນ, ໜຶ່ງສະບັບ ເອົາໄວ້ນຳຜູ້ຮັບເງິນ ແລະ ອີກໜຶ່ງສະບັບສຳເນົາໄວ້.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 45 (ໃໝ່) ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຍຸຍົງ ຄູ່ຄວາມ ຫຼື ບຸກຄົນທີສາມ ບໍ່ໃຫ້ປະຕິບັດພັນທະໃນການເສຍຄ່າທຳນຽມສານ;
2. ແຊກແຊງ, ກ້າວກ່າຍ ຫຼື ຂັດຂວາງ ວຽກງານກ່ຽວກັບຄ່າທຳນຽມສານ;
3. ຂົ່ມຂູ່, ໝິ່ນປະໝາດ ຫຼື ທຳຮ້າຍ ພະນັກງານເກັບຄ່າທຳນຽມສານ;
4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ ແກ່ພະນັກງານເກັບຄ່າທຳນຽມສານ;
5. ໃຫ້ສິນບົນ ແກ່ພະນັກງານເກັບຄ່າທຳນຽມສານ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 46 (ໃໝ່) ຂໍ້ຫ້າມສໍາລັບອົງການຄຸ້ມຄອງຄ່າທໍານຽມສານ**

ຫ້າມອົງການຄຸ້ມຄອງຄ່າທໍານຽມສານ ກໍານົດອັດຕາເກັບຄ່າທໍານຽມສານ ນອກຈາກທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ຢ່າງເດັດຂາດ.

**ມາດຕາ 47 (ໃໝ່) ຂໍ້ຫ້າມສໍາລັບພະນັກງານເກັບຄ່າທໍານຽມສານ**

ຫ້າມ ພະນັກງານເກັບຄ່າທໍານຽມສານ ມີ ພຶດຕິກໍາ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ເຂົ້າຂ້າງ ອອກຊາ, ເລືອກປະຕິບັດ ໃນການເກັບຄ່າທໍານຽມສານ;
2. ເມີນເສີຍ, ລະເລີຍ ຫຼື ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ກ່ຽວກັບຄ່າທໍານຽມສານ;
3. ໃຊ້ທ່າທີແຂງກະດ້າງ, ບໍ່ເໝາະສົມ ໃນການປະຕິບັດໜ້າທີ່ເກັບຄ່າທໍານຽມສານ;
4. ສວຍໃຊ້ອໍານາດ, ຕໍາແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດ ແກ່ຕົນ, ພັກພວກ ຫຼື ຄອບຄົວ;
5. ຮັບສິນບົນ ໃນການເກັບຄ່າທໍານຽມສານ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ໃໝ່) ຂໍ້ຫ້າມສໍາລັບ ຄູ່ຄວາມ, ບຸກຄົນທີສາມ**

ຫ້າມ ຄູ່ຄວາມ, ບຸກຄົນທີສາມ ໃນຄະດີ ແພ່ງ ຫຼື ຈໍາເລີຍ ໃນຄະດີອາຍາ ມີ ພຶດຕິກໍາ ດັ່ງນີ້:

1. ແອບອ້າງບຸກຄົນທີ່ມີສິດອໍານາດ ເພື່ອຂົ່ມຂູ່ ຫຼື ຖ່ວງດຶງເວລາ ໃນການຈ່າຍຄ່າທໍານຽມສານ;
2. ຫຼົບຫຼີກການເສຍຄ່າທໍານຽມສານຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;
3. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ຫຼື ທໍາຮ້າຍ ພະນັກງານເກັບຄ່າທໍານຽມສານ;
4. ສ້າງຄວາມຫຍຸ້ງຍາກ ໃນການເກັບ, ການຮັບ, ການນໍາໃຊ້ ຫຼື ການມອບ ຄ່າທໍານຽມສານ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາ ວຽກງານຄ່າທໍານຽມສານ
## ໝວດທີ 1
## ການຄຸ້ມຄອງວຽກງານຄ່າທໍານຽມສານ

**ມາດຕາ 49 (ປັບປຸງ) ອົງການຄຸ້ມຄອງວຽກງານຄ່າທໍານຽມສານ**

ອົງການຄຸ້ມຄອງວຽກງານຄ່າທໍານຽມສານ ປະກອບດ້ວຍ:

1. ອົງການຄຸ້ມຄອງວຽກງານຄ່າທໍານຽມສານ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້;
2. ອົງການຄຸ້ມຄອງວຽກງານຄ່າທໍານຽມສານ ທີ່ຕ້ອງນໍາໃຊ້ເຂົ້າໃນການດໍາເນີນຄະດີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້.

ອົງການຄຸ້ມຄອງວຽກງານຄ່າທຳນຽມສານ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ ປະກອບດ້ວຍ:

1. ສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ;
2. ກະຊວງຍຸຕິທຳ, ພະແນກຍຸຕິທຳຂັ້ນແຂວງ ແລະ ຫ້ອງການຍຸຕິທຳຂັ້ນເມືອງ.

ອົງການຄຸ້ມຄອງວຽກງານຄ່າທຳນຽມສານ ທີ່ໃຊ້ຈ່າຍໃນການດຳເນີນຄະດີ ແລະ ຄ່າໃຊ້ຈ່າຍອື່ນ ປະກອບດ້ວຍ:

1. ສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ;
2. ອົງການໄອຍະການປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນທ້ອງຖິ່ນ;
3. ອົງການສືບສວນ-ສອບສວນ;
4. ກະຊວງຍຸຕິທຳ, ພະແນກຍຸຕິທຳຂັ້ນແຂວງ ແລະ ຫ້ອງການຍຸຕິທຳຂັ້ນເມືອງ.

ໃນກໍລະນີ ທີ່ສຳນວນຄະດີ ຫາກຢູ່ໃນຄວາມຮັບຜິດຊອບຂອງອົງການໄອຍະການປະຊາຊົນ, ພະແນກຍຸຕິທຳ ຫຼື ຫ້ອງການຍຸຕິທຳນັ້ນ ກໍໃຫ້ອົງການດັ່ງກ່າວ ເປັນຜູ້ຄຸ້ມຄອງວຽກງານຄ່າທຳນຽມສານ ກ່ຽວກັບຄະດີນັ້ນ.

**ມາດຕາ 50 (ໃໝ່) ການຄຸ້ມຄອງຄ່າທຳນຽມສານຢູ່ສານປະຊາຊົນ**

ຈ່າສານ ເປັນຜູ້ຄຸ້ມຄອງຄ່າທຳນຽມສານ ຢູ່ສານປະຊາຊົນຂັ້ນຂອງຕົນ.

ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນ ເມື່ອເກັບແລ້ວຕ້ອງເຮັດໃບມອບເງິນ, ໃບຮັບເງິນ ຄັດຕິດໄວ້ໃນສຳນວນຄະດີ ແລະ ນຳເອົາເງິນດັ່ງກ່າວ ມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານຄ່າທຳນຽມສານຂັ້ນສູນກາງ**

ໃນການຄຸ້ມຄອງວຽກງານຄ່າທຳນຽມສານນັ້ນ ອົງການຄຸ້ມຄອງວຽກງານຄ່າທຳນຽມສານ ຂັ້ນສູນກາງ ຊຶ່ງມີ ສານປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນການ, ລະບຽບການ, ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ວຽກງານຄ່າທຳນຽມສານ;
2. ຊີ້ນຳ ແລະ ຄຸ້ມຄອງ ວຽກງານການຈັດຕັ້ງປະຕິບັດຄ່າທຳນຽມສານ;
3. ສ້າງ, ບຳລຸງ ແລະ ຍົກລະດັບ ຄວາມຮູ້ຄວາມສາມາດ, ຄຸນສົມບັດ, ຈັນຍາທຳ ແລະ ແບບແຜນວິທີເຮັດວຽກໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ;
4. ປະຕິບັດນະໂຍບາຍ ຍ້ອງຍໍ ຕໍ່ພະນັກງານຜູ້ທີ່ມີຜົນງານ ແລະ ລົງວິໄນ ຕໍ່ຜູ້ທີ່ມີຄວາມຜິດໃນການປະຕິບັດວຽກງານຄ່າທຳນຽມສານ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານຄ່າທຳນຽມສານຂັ້ນທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານຄ່າທຳນຽມສານນັ້ນ ອົງການຄຸ້ມຄອງວຽກງານຄ່າທຳນຽມສານ ຂັ້ນທ້ອງຖິ່ນ ຊຶ່ງມີ ສານປະຊາຊົນທ້ອງຖິ່ນ, ພະແນກຍຸຕິທຳຂັ້ນແຂວງ, ຫ້ອງການຍຸຕິທຳຂັ້ນເມືອງ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການສືບສວນ-ສອບສວນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງທາງດ້ານການຈັດຕັ້ງ, ງົບປະມານ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານຂອງພາກສ່ວນທີ່ຂຶ້ນກັບຕົນ;

2. ສະເໜີຕໍ່ຂັ້ນເທິງຖັດຕົນ ໃນການປັບປຸງແກ້ໄຂວຽກງານຄ່າທຳນຽມສານ;

3. ລາຍງານການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານ ຕໍ່ຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານຄ່າທຳນຽມສານ

**ມາດຕາ 53 (ປັບປຸງ) ອົງການກວດກາວຽກງານຄ່າທຳນຽມສານ**

ອົງການກວດກາວຽກງານຄ່າທຳນຽມສານ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄ່າທຳນຽມສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານ ຄ່າທຳນຽມສານ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ທີ່ຂຶ້ນກັບຕົນ ເປັນຕົ້ນ ການຄິດໄລ່ ແລະ ການເກັບຄ່າທຳນຽມສານ ລວມທັງພັນທະອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນຕາມຕົວຈິງ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີ ສິດ ແລະ ໜ້າທີ່ ໃນການກວດກາການຈັດຕັ້ງປະຕິບັດວຽກງານຄ່າທຳນຽມສານ ຕາມຂອບເຂດ ສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານປະຕິບັດວຽກງານກ່ຽວກັບຄ່າທຳນຽມສານ ທີ່ໄດ້ເຮັດສຳເລັດໜ້າທີ່ຂອງຕົນເປັນຢ່າງດີ ແລະ ອົງການຈັດຕັ້ງ ທີ່ໄດ້ໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າໃນວຽກງານຄ່າທຳນຽມສານ ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ພະນັກງານປະຕິບັດວຽກງານກ່ຽວກັບຄ່າທຳນຽມສານ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່, ເກັບຄ່າທຳນຽມສານ ຫຼື ນຳໃຊ້ຄ່າທຳນຽມສານ ບໍ່ຖືກຕ້ອງຕາມກົດໝາຍ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ລົງໂທດ ຕາມກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ຄູ່ຄວາມທີ່ສານຕັດສິນ ໃຫ້ເສຍຄ່າທຳນຽມສານຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແຕ່ບໍ່ປະຕິບັດຕາມຄຳຕັດສິນຂອງສານ ຖືວ່າເປັນການກະທຳຜິດ ແລະ ຈະຖືກລົງໂທດ ຕາມກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 58 (ປັບປຸງ) ການຈັດຕັ້ງປະຕິບັດ**

ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການສືບສວນ-ສອບສວນ, ກະຊວງຍຸຕິທຳ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບເລກທີ 07/ສພຊ, ລົງວັນທີ 27 ທັນວາ 2006.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້